ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ ເລກທີ 02 /ນຍ

# ດຳລັດ

## ຂອງນາຍົກລັດຖະມົນຕີ

## ວ່າດ້ວຍ ເຂດເສດຖະກິດພິເສດ ສະຫວັນ-ເຊໂນ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 01/95, ລົງວັນທີ 8/3/1995;
- ອີງຕາມກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 01/ 97/ສພຊ, ລົງວັນທີ 12 ເມສາ 1997;
- ອີງຕາມກົດໝາຍວ່າດ້ວຍຜັງເມືອງ ສະບັບເລກທີ 03/99/ສພຊ, ລົງວັນທີ 3 ເມສາ /1999;
- ອີງຕາມການສະເໜີ ສະບັບເລກທີ 05/ຄຜຮ, ລົງວັນທີ 02/01/2002 ຂອງ ຄະນະກຳມະການແຜນການ ແລະການຮ່ວມມື.

ເພື່ອແນໃສ່ຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ ຄັ້ງທີ VII ຂອງພັກປະຊາຊົນປະຕິວັດລາວ ແລະຈັດຕັ້ງປະຕິບັດຍຸດທະສາດພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ໄລຍະປີ 2001-2020 ໃຫ້ປະກົດເປັນຈິງ.

**ນາຍົກລັດຖະມົນຕີ ອອກດຳລັດ :**

**ມາດຕາ 1.** ສ້າງຕັ້ງເຂດເສດຖະກິດພິເສດ ສະຫວັນ-ເຊໂນ ທີ່ແຂວງສະຫວັນນະເຂດ, ຊຶ່ງເອີ້ນຫຍໍ້ວ່າ: **"ຂສສຊ"** ໃນຂອບເຂດເນື້ອທີ່ເບື້ອງຕົ້ນ 305 ເຮັກຕາ ຂອງຈຸດ A ແລະ 20 ເຮັກຕາ ຂອງຈຸດ B ຕາມແຜນວາດ 6.5 ຂອງແຜນແມ່ບົດກ່ຽວກັບເຂດເສດຖະກິດພິເສດ.

**ມາດຕາ 2. ຂສສຊ** ແມ່ນຜືນທີ່ດິນ ທີ່ລັດຈັດສັນໃຫ້ ນັກລົງທຶນຕ່າງປະເທດ ແລະພາຍໃນ ສຳລັບການລົງທຶນເພື່ອດຳເນີນທຸລະກິດ ດ້ານການຜະລິດ, ການຄ້າ ແລະ ການບໍລິການ, ຊຶ່ງທຸກການເຄື່ອນໄຫວ ໃນເຂດດັ່ງກ່າວແມ່ນໄດ້ຮັບການສົ່ງເສີມ ແລະຄຸ້ມຄອງດ້ວຍ ກົດໝາຍ, ນະໂຍບາຍ ແລະເງື່ອນໄຂບຸລິມະສິດພິເສດ; ເປັນບ່ອນ

ຕ້ອນຮັບການລົງທຶນ-ເຕັກໂນໂລຊີທີ່ທັນສະໄໝ ເພື່ອແນໃສ່ສ້າງໃຫ້ເປັນສູນກາງໜຶ່ງ ແຫ່ງການຮ່ວມມືດ້ານເສດຖະກິດ, ອຸດສາຫະກຳ, ການຄ້າ ແລະ ການບໍລິການ ຂອງພາກພື້ນ.

**ມາດຕາ 3. ຈຸດປະສົງຂອງການສ້າງຕັ້ງ ເຂດເສດຖະກິດພິເສດ ສະຫວັນ-ເຊໂນ ແມ່ນແນໃສ່:**

3.1. ນຳໃຊ້ທ່າແຮງຂອງເຂດດັ່ງກ່າວ ເພື່ອດຶງດູດ ແລະສົ່ງເສີມການລົງທຶນຈາກຕ່າງປະເທດ ແລະພາຍໃນ ຕາມນະໂຍບາຍການລົງທຶນ ຂອງລັດຖະບານ;

3.2. ເພື່ອເພີ່ມການຜະລິດ, ການສົ່ງອອກສິນຄ້າ ແລະ ການບໍລິການ; ສ້າງໂອກາດໃຫ້ແກ່ການຮຽນຮູ້ບົດຮຽນດ້ານການຄຸ້ມຄອງ-ບໍລິຫານທຸລະກິດ ແລະ ນຳໃຊ້ເຕັກໂນໂລຊີໃໝ່; ສົ່ງເສີມການພົວພັນການຄ້າກັບສາກົນ ແລະພາກພື້ນ; ສ້າງວຽກເຮັດງານທຳໃຫ້ປະຊາຊົນ ແລະຝຶກອົບຮົມພະນັກງານ, ກຳມະກອນ ໃຫ້ມີຄວາມຮູ້, ຄວາມສາມາດ ແລະຄວາມຊຳນານງານສູງຂຶ້ນ.

3.3. ສ້າງໜໍ່ແໜງ ແລະເງື່ອນໄຂ ເພື່ອເປັນພື້ນຖານໃຫ້ແກ່ ການຫັນເປັນອຸດສາຫະກຳ ແລະທັນສະໄໝເທື່ອລະກ້າວ.

**ມາດຕາ 4. ນະໂຍບາຍພື້ນຖານ ຕໍ່ການລົງທຶນ ໃນເຂດ ຂສສຊ**

4.1. ລັດຖະບານ ອະນຸຍາດໃຫ້ ບັນດາບໍລິສັດຂອງລັດ, ເອກະຊົນທັງພາຍໃນ ແລະຕ່າງປະເທດ ລົງທຶນພັດທະນາດ້ານພື້ນຖານໂຄງລ່າງ ແລະສິ່ງອຳນວຍຄວາມສະດວກ ໃນເຂດດັ່ງກ່າວ.

4.2. ການລົງທຶນພັດທະນາ ຂສສຊ ສາມາດດຳເນີນດ້ວຍຮູບການໃດໜຶ່ງ ທີ່ເໝາະສົມ ເຊັ່ນ: ການລົງທຶນຂອງເອກະຊົນພາຍໃນ ແລະຕ່າງປະເທດ 100%; ການລົງທຶນແບບທຸລະກິດປະສົມ ລະຫວ່າງພາຍໃນແລະຕ່າງປະເທດ; ການລົງທຶນຂອງລັດວິສາຫະກິດ; ການລົງທຶນຂອງລັດຮ່ວມກັບ ເອກະຊົນພາຍໃນ ແລະຕ່າງປະເທດ.

4.3. ຂະແໜງເສດຖະກິດ ທີ່ສົ່ງເສີມໃນເຂດ **ຂສສຊ** ມີດັ່ງນີ້ :

+ ອຸດສາຫະກຳຜະລິດ ແລະ ປຸງແຕ່ງ ເພື່ອສົ່ງອອກ (Export Processing Zone –EPZ);

+ ການຄ້າປອດພາສີ (Free Trade Zone - FTZ);

+ ການບໍລິການປອດພາສີ (Free Service and Logistic Zone - FSLZ);

4.4. ນັກລົງທຶນພາຍໃນ ແລະຕ່າງປະເທດ ທີ່ລົງທຶນໃນ **ຂສສຊ** ຈະໄດ້ຮັບສິດທິພິເສດ ດ້ານພາສີ, ອາກອນ, ການເຂົ້າອອກເມືອງ, ເຊົ່າທີ່ດິນ ແລະນະໂຍບາຍອື່ນໆ. ສິດທິພິເສດ ແລະນະໂຍບາຍດັ່ງກ່າວນັ້ນ ຈະໄດ້ກຳນົດໄວ້ຕ່າງຫາກ;

**ມາດຕາ 5. ການຄຸ້ມຄອງ ຂສສຊ**

5.1. **ຂສສຊ** ເຄື່ອນໄຫວຕາມລະບຽບກົດໝາຍ ຂອງ ສປປ ລາວ ແລະລະບຽບການສະເພາະຂອງຕົນ.

5.2. ລັດຖະບານ ເປັນຜູ້ຕົກລົງກ່ຽວກັບ ໂຄງປະກອບການຈັດຕັ້ງ ແລະລະບຽບການເຄື່ອນໄຫວສະເພາະຂອງ **ຂສສຊ**.

5.3. ຄະນະກຳມະການຄຸ້ມຄອງ ແລະສົ່ງເສີມການລົງທຶນພາຍໃນ ແລະຕ່າງປະເທດ ເປັນຜູ້ຊີ້ນຳ-ນຳພາໂດຍກົງຕໍ່ **ຂສສຊ**.

5.4. ອຳນາດການປົກຄອງແຂວງສະຫວັນນະເຂດ, ເມືອງຄັນທະບູລີ, ເມືອງອຸທຸມພອນ ມີໜ້າທີ່ອຳນວຍຄວາມສະດວກ ແລະໃຫ້ການຮ່ວມມື ໃນການຈັດຕັ້ງ ແລະການເຄື່ອນໄຫວຂອງ ຄະນະບໍລິຫານ **ຂສສຊ**, ພ້ອມທັງຂົນຂວາຍນຳພາປະຊາຊົນ ໃນເຂດດັ່ງກ່າວ ໃຫ້ຄວາມຮ່ວມມື ໃນການຈັດຕັ້ງປະຕິບັດ ດຳລັດສະບັບນີ້ເປັນ ຢ່າງດີ.

5.5. ລັດຖະບານ ເປັນຜູ້ແຕ່ງຕັ້ງຄະນະບໍລິຫານ **ຂສສຊ** ເພື່ອບໍລິຫານງານທຸກການເຄື່ອນໄຫວເຂດພິເສດ ຕາມລະບຽບກົດໝາຍ ແລະ ລະບຽບການສະເພາະຂອງເຂດ.

**ມາດຕາ 6. ການຈັດຕັ້ງ ແລະການເຄື່ອນໄຫວ ຂອງ ຂສສຊ**

6.1. **ຂສສຊ** ແມ່ນຫົວໜ່ວຍບໍລິຫານຄຸ້ມຄອງລັດ ແລະເສດຖະກິດ-ສັງຄົມໜຶ່ງ, ຊຶ່ງມີຖານະທຽບເທົ່າກັບຂັ້ນເມືອງ, ຂຶ້ນກັບລັດຖະບານໂດຍກົງ; ເຄື່ອນໄຫວຕາມກົດໝາຍຂອງ ສປປ ລາວ ແລະລະບຽບການສະເພາະຂອງຕົນເອງ. **ຂສສຊ** ປະກອບດ້ວຍ ຄະນະບໍລິຫານ **ຂສສຊ**, ຊຶ່ງມາຈາກຂະແໜງການຂັ້ນສູນກາງ ແລະແຂວງທີ່ກ່ຽວຂ້ອງ ຈຳນວນ 5 ທ່ານ, ໃນນັ້ນ ມີຜູ້ວ່າການ, ຮອງຜູ້ວ່າການ ແລະກຳມະການເຂດຈຳນວນໜຶ່ງ; ຜູ້ວ່າການຖືກແຕ່ງຕັ້ງ ແລະປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ, ຮອງຜູ້ວ່າການ ແລະ ກຳມະການເຂດ ຖືກແຕ່ງຕັ້ງ ແລະປົດຕຳແໜ່ງໂດຍ ປະທານຄະນະກຳມະການແຜນການແລະການຮ່ວມມື. ຄະນະບໍລິຫານ **ຂສສຊ** ມີຫ້ອງການເຮັດວຽກ, ກາປະທັບດວງ ສະເພາະຂອງຕົນ ແລະສາມາດແຕ່ງຕັ້ງໜ່ວຍງານຈຳເປັນຂຶ້ນ ຕາມຄວາມເໝາະສົມ.

6.2. ພາລະບົດບາດ ຂອງຄະນະບໍລິຫານ **ຂສສຊ** : ຄະນະບໍລິຫານ **ຂສສຊ** ເປັນອົງການຈັດຕັ້ງສູງສຸດຂອງ **ຂສສຊ**, ມີພາລະບົດບາດ ບໍລິຫານຄຸ້ມຄອງ ການເຄື່ອນໄຫວຂອງ **ຂສສຊ** ຕາມລະບຽບກົດໝາຍ ທີ່ໄດ້ກຳນົດໄວ້; ຕ້ອນຮັບ ແລະພິຈາລະນາການສະເໜີຂໍລົງທຶນຂອງນັກລົງທຶນ; ກວດກາການປະຕິບັດລະບຽບກົດໝາຍຕ່າງໆ ທີ່ນຳໃຊ້ຢູ່ໃນ **ຂສສຊ**.

6.3. ຄະນະບໍລິຫານ **ຂສສຊ** ມີໜ້າທີ່ຕົ້ນຕໍ ດັ່ງນີ້:

(1). ຄົ້ນຄວ້າ ນຳສະເໜີລະບົບນິຕິກຳ ກ່ຽວກັບ **ຂສສຊ** ຕໍ່ລັດຖະບານ;

(2). ສ້າງແຜນການ, ແຜນງານ ແລະໂຄງການພັດທະນາ **ຂສສຊ**;

(3). ໂຄສະນາ, ຂົນຂວາຍ ຜູ້ທີ່ຈະມາລົງທຶນພັດທະນາເຂດ;

(4). ພິຈາລະນາ ແລະ ອະນຸມັດການລົງທຶນ ຂອງນັກລົງທຶນ ໃນ **ຂສສຊ**;

(5). ປະສານສົມທົບກັບ ບັນດາກະຊວງ, ຂະແໜງການ, ອຳນາດການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ທີ່ພົວພັນເຖິງການເຄື່ອນໄຫວ **ຂສສຊ**;

(6). ອຳນວຍຄວາມສະດວກໃຫ້ແກ່ນັກລົງທຶນ;

(7). ລາຍງານການປະຕິບັດງານ ໃນການຄຸ້ມຄອງ **ຂສສຊ** ໃຫ້ລັດຖະບານ ແລະແຂວງກ່ຽວຂ້ອງຊາບ ໃນແຕ່ລະໄລຍະ.

6.4. ງົບປະມານ ຂອງຄະນະບໍລິຫານ **ຂສສຊ** : ຄະນະບໍລິຫານ **ຂສສຊ** ເຄື່ອນໄຫວດ້ວຍງົບປະມານ ຂອງຕົນເອງເປັນຈຸດໜັກ, ຊຶ່ງເບື້ອງຕົ້ນໄດ້ມາຈາກ ການປະກອບສ່ວນຂອງລັດ, ການຮ່ວມທຶນຂອງເອກະຊົນ ພາຍໃນ ແລະຕ່າງປະເທດ ແລະ ລາຍຮັບອື່ນໆ.

6.5. ລາຍໄດ້ໃນ **ຂສສຊ** ຄຸ້ມຄອງຕາມກົດໝາຍ ແລະລະບຽບການສະເພາະຂອງ **ຂສສຊ**.

**ມາດຕາ 7. ທີ່ດິນ ແລະ ການຈັດສັນທີ່ດິນ ໃນເຂດເສດຖະກິດພິເສດພິເສດ ສະຫວັນ-ເຊໂນ**

- ບຸກຄົນ ຫຼື ກຸ່ມຄົນ ທີ່ໄດ້ນຳໃຊ້ທີ່ດິນໃນເຂດດັ່ງກ່າວມາກ່ອນແລ້ວນັ້ນ ຕ້ອງໄດ້ຍົກຍ້າຍອອກຈາກເນື້ອທີ່ດິນ ທີ່ໄດ້ກຳນົດເປັນ **ຂສສຊ**, ລັດຖະບານ ມີນະໂຍບາຍເວນຄືນ ຕາມລະບຽບກົດໝາຍ.
- ບັນດາໂຮງງານ ແລະບໍລິສັດຕ່າງໆ ທີ່ຕັ້ງຢູ່ເຂດ **ຂສສຊ** ກ່ອນການສ້າງຕັ້ງ **ຂສສຊ** ນີ້ ສາມາດນຳໃຊ້ ນະໂຍບາຍຂອງເຂດໄດ້ ບົນພື້ນຖານການປັບປຸງຕົນເອງ ໃຫ້ສອດຄ່ອງກັບເງື່ອນໄຂ ແລະ ມາດຖານ ທີ່ຄະນະບໍລິຫານ **ຂສສຊ** ກຳນົດອອກ.
- ພື້ນທີ່ດິນໃນເຂດເສດຖະກິດພິເສດ ສະຫວັນ-ເຊໂນ ເປັນກຳມະສິດແຫ່ງຊາດ. ບຸກຄົນ, ນິຕິບຸກຄົນ ແລະ ນັກລົງທຶນຕ່າງປະເທດ ແລະພາຍໃນ ມີສິດເຊົ່າ, ນຳໃຊ້, ສືບທອດ ແລະໂອນ ຕາມກົດໝາຍລວມ ແລະ ພິເສດ.

**ມາດຕາ 8.** ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ. ກະຊວງ, ອົງການທຽບເທົ່າ, ແຂວງ, ກຳແພງນະຄອນ, ເຂດພິເສດ, ຄະນະບໍລິຫານ **ຂສສຊ** ແລະ ພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

ວຽງຈັນ, ວັນທີ 21-01-2002

**ນາຍົກລັດຖະມົນຕີ**